**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 13 ພຶສຈິກາ 2022 (11-13-2022)**

---

## ການເຊື່ອຟັງພຣະຄຳຂອງພຣະເຈົ້າ

*ແມ່ນຄຳແນະນຳແບບໃດທີ່ເຫັນວ່າເປັນຄຳແນະນຳທີ່ດີທີ່ຄົນມັກຈະບໍ່ສົນໃຈ?*

**ຈຸດສຳຄັນໃນບົດຮຽນ:** ພວກເຮົາສະແດງຄວາມຈິງແລະຄຸນຄ່າຂອງພຣະຄຳພຣະເຈົ້າຂນະທີ່ພວກເຮົາດຳເນີນຊີວິດຕາມນັ້ນ.
**ພຣະຄັມພີຕອບສນອງຕໍ່ຊີວິດ:**
ນັກຊ່ຽວຊານ-ຜູ້ທີ່ຮູ້ຈັກໃນສິ່ງທີ່ພວກເຂົາເວົ້າເຖິງ-ປົກກະຕິແລ້ວພວກເພິ່ນໄດ້ສເນີຄຳແນະນຳທີ່ມີປໂຍດທີ່ພວກເຮົາເມີນເສີຍຢູ່ຕລອດ.

- ນາຍຊ່າງຊ້ອມແປງຣົດໄດ້ໃຫ້ຄຳແນະນຳໃຫ້ພວກເຮົາປ່ຽນນ້ຳມັນເຄື່ອງຣົດທຸກໆຄັ້ງເມື່ອໃຊ້ງານຫຼາຍເຖິງຫ້າພັນໄມຍ໌ ແຕ່ພວກເຮົາມັກຈະຂັບຣົດນັ້ນເກີນໄປກ່ວານັ້ນອີກຫຼາຍພັນໄມຍ໌ ກ່ອນທີ່ພວກເຮົາຈະປ່ຽນມັນ.
- ທ່ານໝໍບອກພວກເຮົາໃຫ້ກິນອາຫານທີ່ດີມີຄຸນນະພາບແລະອອກກຳລັງກາຍເປັນປະຈຳເພື່ອຈະມີສຸຂພາບອັນດີ, ແຕ່ພວກເຮົາສ່ວນໃຫ່ຍຈະປະຕິເສດທີ່ຈະເຮັດເປັນປົກກະຕິ ເຮັດເປັນບາງເວລາ.
- ໝໍປົວແຂ້ວຈະແນະນຳໃຫ້ພວກເຮົາຖູແຂ້ວ ແລະຖູເປັນປະຈຳ, ແຕ່ພວກເຮົາບາງຄົນຜັດລໍຖ້າເບິ່ງວ່າເມື່ອໃດໝໍແຂ້ວຈະນັດໃຫ້ໄປພົບ.

ຄວາມຈິງແມ່ນ, ພວກເຮົາຮູ້ຫຼາຍໂພດ "ກັບການປະຕິບັດທີ່ດີທີ່ສຸດ," ແຕ່ການທີ່ຈະເຮັດຢ່າງຕໍ່ເນື່ອງນັ້ນມີນ້ອຍ, ຄວາມຮູ້ໃນຕົວມັນເອງນັ້ນຍັງບໍ່ພຽງພໍ; ພວກເຮົາຕ້ອງປະຕິບັດຕາມສິ່ງທີ່ພວກເຮົາຮູ້. ຫຼັກການນີ້ໃຊ້ໄດ້ປໂຍດຫຼາຍກ່ວາການປ່ຽນນ້ຳມັນເຄື່ອງ, ລະບຽບການອອກກຳລັງກາຍແລະນິສັຍບໍໝັ່ນຖູແຂ້ວ. ມັນຍັງເນັ້ນໃສ່ການສອນຂອງພຣະຄັມພີ. ພວກເຮົາບໍ່ອ່ານ, ບໍ່ສຶກສາ, ຫຼືທອ່ງຈຳພຣະຄັມພີຂອງພຣະເຈົ້າພຽງແຕ່ໃຫ້ຮູ້ຈັກເທົ່ານັ້ນ. ແຕ່ພຣະເຈົ້າຄາດໝາຍໃຫ້ພວກເຮົາປະຕິບັດຕາມແລະເຊື່ອຟັງສິ່ງທີ່ພວກເຮົາໄດ້ຮຽນຮູ້.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ຢາໂກໂບ 1:19-21

*19. ພີ່ນ້ອງທີ່ຮັກຂອງເຮົາເອີຍ, ພວກເຈົ້າກໍຮູ້ຂໍ້ນີ້ແລ້ວ ແຕ່ຈົ່ງວ່ອງໄວໃນການຟັງ ຈົ່ງຊ້າໃນການເວົ້າ, ຈົ່ງຊ້າໃນການຮ້າຍ. 20.*
*ເພາະຄວາມຮ້າຍຂອງມະນຸດບໍ່ໄດ້ເຮັດໃຫ້ຄວາມຍຸດຕິທັມຂອງພຣະເຈົ້າເກີດມາ. 21. ເຫດສັນນັ້ນ, ຈົ່ງເລີກຈາກຄວາມຊົ່ວມົວໝອງ*
*ທຸກຢ່າງ ແລະຄວາມຊົ່ວຮ້າຍອັນເຫຼືອຫຼາຍ ຈົ່ງນ້ອມໃຈຮັບເອົາພຣະທັມທີ່ປູກຝັງໄວ້ແລ້ວນັ້ນ ຊຶ່ງສາມາດຊ່ອຍຈິດວິນຍານຂອງພວກ*
*ທ່ານໃຫ້ພົ້ນໄດ້.*

ພວກເຮົາສ່ວນໃຫ່ຍບໍ່ມັກໃຫ້ໃຜບອກວ່າຈະເຮັດຫັຍງ. ບໍ່ວ່າຈະເປັນການສັ່ງຄວາມໄວ້ຫຼືຄຳສັ່ງຂອງໝໍ, ທັມມະຊາດຂອງພວກເຮົາແມ່ນໂນ້ມອຽງໄປທາງປະຕິເສດຄຳສັ່ງ-ຫຼືຢ່າງນ້ອຍບໍ່ສົນໃຈມັນ. ພວກເຮົາອາດໜີໄປຈາກສິ່ງນັ້ນໃນບາງຈຸດຂອງຊີວິດ, ແຕ່ພວກເຮົາບໍ່ສາມາດລະເລີຍຕໍ່ອຳນາດຂອງພຣະຄຳຂອງພຣະເຈົ້າໂດຍທີ່ຈະບໍ່ມີຜົນກະທົບໃດໆໃນທາງລົບ. ອັນນີ້ແມ່ນເປັນຄວາມຈິງ; ພວກເຮົາບໍ່ສາມາດຕິດຕາມອົງພຣະເຢຊູໂດຍທີ່ບໍ່ຕ້ອງການໃຫ້ພຣະອົງບອກພວກເຮົາເຖິງວິທີການດຳເນີນຊີວິດ. ການເຊື່ອຟັງຄຳສັ່ງຂອງພຣະອົງແມ່ນຈຸດສູງສຸດໃນຫົວໃຈຂອງການມີສາຍສຳພັນກັບພຣະເຢຊູ. ພຣະອົງກ່າວວ່າ, "ຖ້າທ່ານຮັກເຮົາທ່ານຈະຖືຮັກສາຄຳສັ່ງຂອງເຮົາ" (ໂຢຮັນ 14: 15).

ພຣະທັມຄັມພີຢາໂກໂບເປັນພຣະຄັມພີເຫຼັ້ມນຶ່ງທີ່ກ່າວເຖິງການປະຕິບັດຫຼາຍທີ່ສຸດໃນພາກພຣະສັນຍາໃໝ່. ຢາໂກໂບໄດ້ອ້າງອີງເຖິງຄວາມເຂົ້າໃຈໃນການປະຕິບັດເພື່ອການເຊື່ອຟັງພຣະເຢຊູໃນໂລກແຫ່ງຄວາມຈິງ. ຢາໂກໂບໄດ້ສຸມໃຈໃສ່ການຊ່ວຍເຫຼືອຜູ້ທີ່ຕິດຕາມພຣະຄຣິດໃຫ້ເຊື່ອມຕໍ່ຄວາມຮູ້ໃນພຣະຄັມພີກັບຊີວິດຂອງພຣະຄຣິດ.

ໃນຂໍ້ 21, ຢາໂກໂບໄດ້ຂຽນວ່າ, "ເຫດສັນນັ້ນ, ຈົ່ງເລີກຈາກຄວາມຊົ່ວມົວໝອງທຸກຢ່າງ ແລະຄວາມຊົ່ວຮ້າຍອັນເຫຼືອຫຼາຍ ຈົ່ງນ້ອມໃຈຮັບເອົາພຣະທັມທີ່ປູກຝັງໄວ້ແລ້ວນັ້ນ ຊຶ່ງສາມາດຊ່ອຍຈິດວິນຍານຂອງພວກທ່ານໃຫ້ພົ້ນໄດ້." ພວກເຮົາສັງເກດເຫັນຄວາມຈິງສອງຢ່າງຢູ່ທີ່ນີ້. ອັນທີ່ນຶ່ງ, ໃຫ້ສັງເກດເບິ່ງຖ້ອຍຄຳທີ່ມາຈາກຣິດອຳນາດຂອງຂ່າວປະເສີດທີ່ພຣະເຈົ້າໄດ້ປູກຝັງໄວ້ຢູ່ໃນຫົວໃຈຂອງພວກເຮົາໃນເວລາທີ່ຕ້ອນຮັບເອົາຄວາມລອດໃໝ່ໆ.

ອັນທີສອງ, ສັງເກດເບິ່ງວ່າຢາໂກໂບໄດ້ບອກພວກເຮົາເຖິງວິທີທີ່ຈະໄດ້ຮັບພຣະຄຳຝັງໄວ້ໃນໃຈຢ່າງໃດ. ພວກເຮົາຕ້ອງຕ້ອນຮັບເອົາພຣະຄຳ "ດ້ວຍຄວາມຖ່ອມຕົວ." ຄວາມຖ່ອມຕົວແມ່ນເປັນລັກສນະຂອງຫົວໃຈທີ່ຮັບຮູ້ຄວາມຕ້ອງການຂອງພວກເຮົາແລະຍອມຮັບຄວາມບໍ່ສົມບູນແບບຂອງພວກເຮົາ. ຄວາມຖ່ອມຕົວນັ້ນໃນທີ່ສຸດກໍ່ຊ່ວຍໃຫ້ຍອມຮັບຮູ້ໃນສິດທິຂອງຄົນອື່ນແລະຊ່ວຍໃຫ້ດຳເນີນໃຊ້ຊີວິດເພື່ອຄວາມດີຂອງຄົນອື່ນ.

*ຄວາມຖ່ອມຕົວມີຄວາມສຳຄັນແນວໃດຕໍ່ການເຊື່ອຟັງ?*

ເມື່ອພວກເຮົາຮັບເອົາຂ່າວປະເສີດແລະພຣະຄຳຂອງພຣະເຈົ້າ, ພວກເຮົາຫັນໜີຈາກວິທີການດຳເນີນຊີວິດແບບເກົ່າ. ພວກເຮົາລະຖິ້ມວິທີການດຳເນີນຊີວິດແບບເດີມ "ຄວາມຊົ່ວມົວໝອງທຸກຢ່າງແລະຄວາມຊົ່ວຮ້າຍອັນເຫຼືອຫຼາຍ"(ຂໍ້ 21). ນີ້ແມ່ນຮູບພາບຂອງສິ່ງທີ່ເກີດຂຶ້ນໃນຕອນຕົ້ນທີ່ພວກເຮົາຫັນໜີຈາກວິທີການດຳເນີນຊີວິດແບບເກົ່າແບບເດີມທີ່ຄິດວ່າເປັນການດຳເນີນຊີວິດທີ່ດີສູງສົ່ງແລະຫັນມາເຊື່ອໃນພຣະເຢຊູ. ອັນນີ້ມັນມີຄ່າຫຼາຍກ່ວາຄວາມລອດໃນເບື້ອງຕົ້ນ. ພວກເຮົາຕ້ອງກຳຈັດຄວາມຊົ່ວຮ້າຍນີ້ຢ່າງຕໍ່ເນື່ອງເພື່ອການເຕີບໂຕຊີວິດໃໝ່ຂອງພວກເຮົາ.

ຢາໂກໂບຍັງໄດ້ເອີ້ນໃຫ້ເອົາໃຈໃສ່ກັບນິສັຍພຶດຕິກັມປະຈຳວັນທີ່ບໍ່ດີທີ່ພວກເຮົາຕ້ອງຕໍ່ສູ້ເອົາຊະນະກັບມັນ. ໃນຂໍ້ 19-20, ຢາໂກໂບໄດ້ຊີ້ໃຫ້ເຫັນເຖິງວິທີທີ່ພວກເຮົາຟັງ, ພວກເຮົາເວົ້າ, ແລະສະແດງຄວາມໂກດຮ້າຍ, ເມື່ອພວກເຮົາເຮັດສິ່ງເຫຼົ່ານັ້ນ, ພວກເຮົາກໍເປັນຄົນຊົ່ວຮ້າຍທີ່ຢາໂກໂບໄດ້ກ່າວໄວ້, ເພາະວ່າ "ຄວາມຄຽດຮ້າຍຂອງມະນຸດບໍ່ໄດ້ເຮັດໃຫ້ຄວາມຊອບທັມຂອງພຣະເຈົ້າເຖິງທີ່ສຳເຣັດ."

ຕາມທັມມະຊາດ, ມະນຸດເຮົາບໍ່ມັກຟັງຄວາມກັງວົນຂອງຄົນອື່ນຫຼືຢາກໄດ້ຍິນທັສນະທີ່ກົງກັນຂ້າມຂອງຄົນອື່ນ. ແຕ່ພຣະຄັມພີກ່າວວ່າໄພ່ພົນຂອງພຣະເຈົ້າ "ຄວນຈະວ່ອງໄວໃນການຟັງ, ຊັກຊ້າໃນການເວົ້າ, ແລະຊ້າທີ່ຈະໃຈຮ້າຍ" (ຂໍ້ 19) ເມື່ອພວກເຮົາເຮັດແບບນີ້ກໍ່ສະແດງວ່າພວກເຮົາໄດ້ສະແດງຄວາມຖ່ອມຕົວແລະເຮັດຕາມສິ່ງທີ່ພວກເຮົາໄດ້ຮຽນຮູ້ຈາກພຣະຄັມພີຂອງພຣະເຈົ້າ.

## 2. ຢາໂກໂບ 1:22-25

*22. ແຕ່ທ່ານທັງຫລາຍຈົ່ງກາຍເປັນຜູ້ຂັບຕາມພຣະທັຍນັ້ນ ບໍ່ແມ່ນເປັນແຕ່ພຽງຜູ້ໄດ້ຍິນເທົ່ານັ້ນ ຊຶ່ງເປັນການລໍ້ລວງຕົນເອງ. 23. ເພາະວ່າຖ້າຜູ້ໃດໄດ້ຍິນພຣະທັມແລະບໍ່ຂັບຕາມ ຜູ້ນັ້ນກໍເປັນເໝືອນຄົນທີ່ເບິ່ງໜ້າຂອງຕົນໃນແວ່ນ. 24. ເພາະເມື່ອແຍງເບິ່ງຕົວເອງແລ້ວກໍອອກໄປ ແລ້ວກໍລືມໃນທັນທີນັ້ນໂລດວ່າຕົວເອງເປັນຢ່າງໃດ. 25. ແຕ່ຜູ້ທີ່ພິຈາລະນາເບິ່ງໃນພຣະບັນຍັດອັນດີທີ່ສຸດ ຊຶ່ງເປັນພຣະບັນຍັດທີ່ໃຫ້ມີເສລີພາບ ແລະຕັ້ງຢູ່ໃນພຣະທັມບັນຍັດນັ້ນ ຜູ້ນັ້ນບໍ່ເປັນຜູ້ທີ່ໄດ້ຍິນແລ້ວຫລົງລືມໄປ ແຕ່ເປັນຜູ້ຂັບຕາມ ຜູ້ນັ້ນແຫຼະ, ຈະໄດ້ຮັບຄວາມສຸກໃນກິຈການຂອງຕົນ.*

ຢາໂກໂບໄດ້ໃຫ້ຄຳຕັກເຕືອນທີ່ບໍ່ອາດສາມາດເຮັດໃຫ້ລະເລີຍໄດ້ຄື: "ຈົ່ງເຮັດຕາມພຣະຄຳຂອງພຣະເຈົ້າແລະບໍ່ແມ່ນພຽງແຕ່ເປັນຜູ້ໄດ້ຍິນໄດ້ຟັງເທົ່ານັ້ນ, ຊຶ່ງເປັນການລໍ້ລວງຕົນເອງ"(ຂໍ້ 22). ເຣື່ອງນີ້ໄດ້ສະແດງໃຫ້ເຫັນເຖິງການລໍ້ລວງທີ່ຊາວຄຣິສະຕຽນຫຼາຍຄົນໄດ້ປະເຊີນ: ຍິ່ງພວກເຮົາສຳຜັດກັບພຣະຄຳຂອງພຣະເຈົ້າຫຼາຍເທົ່າໃດ, ພວກເຮົາກໍຍິ່ງເຕີບໂຕໃຫ່ຍຂຶ້ນຫຼາຍເທົ່ານັ້ນ. ການຖືກລໍ້ລວງແມ່ນ

ເຮັດໃຫ້ພວກເຮົາເຫັນຈຸດປະສົງເປົ້າໝາຍຄວາມຮູ້ໃນຕົວມັນເອງ. ຖ້າພວກເຮົາເຮັດຜິດ, ພວກເຮົາອາດຈະລໍ້ລວງຕົນເອງໃຫ້ຄິດວ່າພຣະເຈົ້າເນັ້ນໃສ່ຄວາມຮູ້ຫຼາຍກ່ວາການເຊື່ອຟັງ, ພຣະເຈົ້າບໍ່ຕ້ອງການໃຫ້ພວກເຮົາອ່ານ, ສຶກສາ, ຫຼືທ່ອງຈຳພຣະຄັມພີເພື່ອເຫັນແກ່ການຮູ້ຈັກວ່າພຣະຄຳນັ້ນເວົ້າຫຍັງ. ພຣະເຈົ້າຄາດຫັວງໃຫ້ພວກເຮົາຂັບຕາມແລະເຊື່ອຟັງໃນສິ່ງທີ່ພວກເຮົາໄດ້ຮຽນຮູ້ແລ້ວ.

ພຣະຄຳຂອງພຣະເຈົ້າເປັນຄືແວ່ນແຍງໃຫ້ເຫັນເຖິງຊີວິດຈິດວິນຍານຂອງພວກເຮົາ. ເມື່ອພວກເຮົາອ່ານຫຼືສຶກສາເອົາ, ພຣະເຈົ້າໄດ້ສະແດງໃຫ້ພວກເຮົາເຫັນວ່າຈິງແທ້ພວກເຮົາເປັນໃຜໃນການປຽບທຽບໃສ່ກັບພຣະອົງ. ພວກເຮົາຮຽນຮູ້ວ່າຊີວິດຂອງພວກເຮົາບໍ່ສອດຄ່ອງກັບເສັ້ນທາງບໍຣິສຸດຂອງພຣະອົງ. ດັ່ງນັ້ນ, ເມື່ອພວກເຮົາຮູ້ຈັກພຣະຄຳຂອງພຣະເຈົ້າແລ້ວແຕ່ບໍ່ໄດ້ມີການປັບປຸ່ງຊີວິດຂອງພວກເຮົາໂດຍການເຊື່ອຟັງພຣະຄຳ, ພວກເຮົາຈະເຫັນການເກີດຄວາມເສື່ອມເສັຽໃນຊີວິດຂອງພວກເຮົາແທນທີ່ຈະເປັນກຽດອັນໃຫ່ຽຫຼວງ, ແຕ່ບໍ່ໄດ້ຮັບຫັຽງເລີຍ. ຄວາມຂາດເຂີນຂອງພວກເຮົາອາດຈະສະແດງໃຫ້ເຫັນວ່າ, ໃນຂນະທີ່ພວກເຮົາເຫັນຄວາມຈິງຂອງພຣະເຈົ້າ, ພວກເຮົາບໍ່ໃຫ້ຄວາມສົນໃຈພຽງພໍທີ່ຈະຮັບການປ່ຽນແປງໃດໆ, ສິ່ງນີ້ບາງທີອາດເປັນອັນຕລາຍຫຼາຍກວ່າເກົ່າ, ຖ້າພວກເຮົາບໍ່ສົນໃຈພຣະຄັມພີດົນເກີນໄປ, ພວກເຮົາກໍບໍ່ສາມາດເຮັດໃຫ້ຕົວເຮົາເອງໝັ້ນໃຈໄດ້ວ່າພຣະຄຳຂອງພຣະເຈົ້າໄດ້ສຳແດງໃຫ້ພວກເຮົາເຫັນສິ່ງທີ່ພຣະຄຳຈະສຳແດງໃຫ້ເຫັນ. ຄຳຕອບຂອງຢາໂກໂບໃນເຣື່ອງນີ້ຄືການອົດທົນໃນການເຊື່ອຟັງຄຳສັ່ງຂອງພຣະຄັມພີໂດຍບໍ່ຊັກຊ້າ. ຜູ້ທີ່ເຮັດຕາມສິ່ງນີ້ "ຈະໄດ້ຮັບພຣະພອນໃນສິ່ງທີ່ລາວເຮັດ" (ຂໍ້ 25).

ຄວາມຈິງແມ່ນພວກເຮົາທຸກຄົນອາດຈະເລື່ອນເວລາໄປໃນທາງໃດທາງນຶ່ງ, ແຕ່ໜ້າເສັຽດາຍ, ພວກເຮົາສາມາດເລື່ອນເວລາທາງຈິດວິນຍານດ້ວຍ, ພວກເຮົາທຸກຄົນລົ້ມລຸກຄຸກຄານກັບການເຊື່ອຟັງພຣະຄຳຂອງພຣະເຈົ້າ. ບາງຄັ້ງ, ມັນອາດເປັນຍ້ອນພວກເຮົາມີຄວາມລະອາຍຫຼືອາຍໃນສິ່ງທີ່ພວກເຮົາໄດ້ເຮັດ. ເວລາອື່ນອີກ, ພວກເຮົາພຽງແຕ່ບໍ່ຕ້ອງການທີ່ຈະເຮັດໃຫ້ມີການປ່ຽນແປງຊີວິດໃຫ້ຖືກຕ້ອງສອດຄ່ອງກັບພຣະຄັມພີຂອງພຣະອົງ. ພວກເຮົາໂນ້ມນ້າວພວກເຮົາເອງວ່າມັນເປັນການງ່າຍກວ່າການທີ່ຈະຈັດລະບຽບຕົນເອງໃຫ້ເຂົ້າໄປໃນຮູບແບບຄ່ານິຍົມໃນພຣະຄຳຂອງພຣະເຈົ້າ. ຢາໂກໂບຮຽກຮ້ອງໃຫ້ພວກເຮົາຫ່າງຈາກການຊັກຊ້າລຳນາທີສຸດທ້າຍເຣື່ອງຝ່າຍຈິດວິນຍານ. ພຣະເຈົ້າບໍ່ຕ້ອງການໃຫ້ພວກເຮົາໄດ້ຍິນພຣະຄຳຂອງພຣະອົງໃນມື້ນີ້ແລະຫຼັງຈາກນັ້ນລໍຖ້າຈົນກ່ວາມີໂອກາດເພື່ອຈະປະຕິບັດຕາມມັນ, <u>ພຣະອົງຕ້ອງການໃຫ້ພວກເຮົາຮູ້ຈັກພຣະຄຳຂອງພຣະອົງເພື່ອພວກເຮົາຈະໄດ້ເຮັດຕາມພຣະຄຳນັ້ນໃນວັນນີ້.</u>

## 3. ຢາໂກໂບ 1:26-27

*26. ຖ້າຜູ້ໃດຄຶດວ່າຕົນເປັນຄົນມີທັມມະ ແລະບໍ່ໄດ້ຫ້າມລີ້ນຂອງຕົນ ແຕ່ລໍ້ລວງຕົວເອງ ທັມມະຂອງຄົນນັ້ນກໍບໍ່ມີປໂຍດ. 27. ທັມມະທີ່ບໍຣິສຸດແລະບໍ່ມີການຊົ່ວມົວໝອງຕໍ່ພຣະພັກພຣະເຈົ້າ ຜູ້ຊົງເປັນພຣະບິດາ ກໍມີດັ່ງນີ້ ຄືການຢ້ຽມຢາມລູກກຳພ້າແລະຍິງໝ້າຍທີ່ມີຄວາມທຸກຮ້ອນ ແລະການຮັກສາຕົວໃຫ້ພົ້ນຈາກການດ່າງພ້ອຍຂອງໂລກ.*

ເມື່ອພວກເຮົາບໍ່ປະຕິບັດໃນສິ່ງທີ່ພວກເຮົາຮຽນຮູ້ຈາກພຣະຄຳຂອງພຣະເຈົ້າ, ມັນເປັນຄວາມເຊື່ອທີ່ບໍ່ມີປໂຍດ. ມັນເປັນໄປໄດ້ຂ້ອນຂ້າງທີ່ຈະເປັນນັກສຶກສາທີ່ມີປະສົບການໃນພຣະຄຳຂອງພຣະເຈົ້າແລະຍັງປະຕິບັດຕາມສາສນາ. ພວກເຮົາຕ້ອງຮັກສາຈິດໃຈຂອງພວກເຮົາຢູ່ສເມີໂດຍການກວດສອບຕົວເອງເພື່ອໃຫ້ແນ່ໃຈວ່າພວກເຮົາກຳລັງເຮັດຕາມການເຊື່ອຟັງທີ່ສັດຊື່ແທນທີ່ຈະສແວງຫາຄວາມຮູ້. ເມື່ອການກະທຳຂອງພວກເຮົາບໍ່ສອດຄ່ອງກັບຄວາມຈິງທີ່ພວກເຮົາອ້າງວ່າພວກເຮົາຮູ້, ໂດຍພື້ນຖານແລ້ວ ພວກເຮົາກາຍເປັນຄືກັບຄົນທີ່ໜ້າຊື່ໃຈຄົດທີ່ພຣະເຢຊູໄດ້ກ່າວຊໍ້າແລ້ວຊໍ້າອີກໃນມັດທາຍ 6. ພວກເຮົາຄືຄົນໜ້າຊື່ໃຈຄົດ ເມື່ອພວກເຮົາບໍ່ໄດ້ເຮັດແລະເຊື່ອຟັງສິ່ງທີ່ພວກເຮົາໄດ້ຮຽນຮູ້. ພວກເຮົາອາດອ້າງວ່າມີຄວາມເຊື່ອທີ່ມີຊີວິດຊີວາ ແຕ່ພຣະຄັມພີຂອງພຣະເຈົ້າໄດ້ບອກວ່າ "ສາສນາຂອງພວກເຮົາບໍ່ມີປໂຍດ." ນີ້ໝາຍຄວາມວ່າທ່ານຈະໄປເຖິງຈຸດທີ່ທ່ານຈະເຊື່ອຟັງທຸກຢ່າງທີ່ທ່ານໄດ້ຮຽນຮູ້ໄດ້ສົມບູນແບບບໍ? ແນ່ນອນບໍ! ແລະມັນບໍ່ໄດ້ໝາຍຄວາມວ່າການທີ່ມີຂໍ້ບົກພ່ອງໃນຈຸດໃດຈຸດນຶ່ງຂອງຊີວິດຈະຖືວ່າຄວາມເຊື່ອທັງໝົດຂອງຊີວິດບໍ່ມີປໂຍດ. ເຖິງຢ່າງໃດກໍຕາມ, ມັນຄວນຈະເຮັດໃຫ້ພວກເຮົາປະເມີນໃຫ້ເຫັນໃນຮູບແບບທົ່ວໆໄປຂອງຊີວິດຂອງພວກເຮົາ. ຜູ້ທີ່ມີຄວາມເຊື່ອຢ່າງສັດຊື່ນັ້ນບໍ່ພຽງແຕ່ຮູ້ຈັກພຣະຄຳຂອງພຣະເຈົ້າເທົ່ານັ້ນ, ລາວຈະຕ້ອງປະຕິບັດຕາມຄວາມເຊື່ອນັ້ນ. ຄວາມເຊື່ອທີ່ແທ້ຈິງແມ່ນມາຈາກຄຳເວົ້າແລະການກະທຳຂອງຜູ້ເຊື່ອ. ຢາໂກໂບໄດ້ໃຫ້ລັກສນະຄຸນສົມບັດວ່າຄວາມເຊື່ອທີ່ແທ້ຈິງມີລັກສນະແນວໃດ, ທ່ານໄດ້ໃຫ້ສາມຕົວຢ່າງ

ຂອງພຣະຄຳພຣະເຈົ້າໃນການປະຕິບັດ. ການປະຕິບັດເຫຼົ່ານີ້ບໍ່ໄດ້ໝາຍຄວາມວ່າຈະໝົດໄປ, ແຕ່ມັນເປັນທັງຕົວຢ່າງແລະຕົວແທນຂອງການດຳເນີນຊີວິດຕາມຄຳສັ່ງຂອງພຣະຄັມພີ.

1. **ພວກເຮົາຄວບຄຸມລີ້ນຂອງພວກເຮົາ.** ຢາໂກໂບໄດ້ເວົ້າເພີ້ມເຕີມຫຼາຍຢ່າງກ່ຽວກັບເຣື່ອງນີ້ໃນບົດທີ່ 3, ແຕ່ພວກເຮົາຕ້ອງຍຶດໝັ້ນໃນສິ່ງທີ່ພວກເຮົາເວົ້າ.
2. **ພວກເຮົາຕ້ອງເບິ່ງແຍງຜູ້ທີ່ມີຄວາມສ່ຽງຕໍ່ການຖືກທຳຮ້າຍ.** ຢາໂກໂບໄດ້ເນັ້ນໜັກໃສ່ການເບິ່ງແຍງຄົນສອງກຸ່ມ "ເດັກກຳພ້າແລະແມ່ໝ້າຍ," ສອງກຸ່ມທີ່ມີຄວາມສ່ຽງໂດຍສະເພາະໃນສະຕະວັດອຳອິດ.
3. **ພວກເຮົາດຳເນີນຊີວິດອັນບໍຣິສຸດ.** ພວກເຮົາຈະຕ້ອງຮັກສາຕົນເອງໃຫ້ຫ່າງໄກຈາກສິ່ງທີ່ເປັນມົນທິນຫຼືຄ່ານິຍົມຂອງໂລກ. ນີ້ແມ່ນການຮຽກເອີ້ນແບບທົ່ວໆໄປເພື່ອຮັກສາຕົນໃຫ້ສະອາດແລະບໍຣິສຸດ.

ພວກເຮົາອາດບໍ່ສົນໃຈໃນຄຳແນະນຳຂອງຜູ້ຊ່ຽວຊານໃນຫຼາຍໆດ້ານຂອງຊີວິດ, ແຕ່ກັບພຣະຄຳຂອງພຣະເຈົ້ານັ້ນມັນແຕກຕ່າງກັນ. ພຣະເຈົ້າຊົງຮຽກຮ້ອງໃຫ້ພວກເຮົາປະຕິບັດຕາມສິ່ງທີ່ພວກເຮົາໄດ້ຄົ້ນພົບໃນພຣະຄັມພີຂອງພຣະອົງເພື່ອວ່າພວກເຮົາຈະສາມາດເປັນຜູ້ປະຕິບັດຕາມພຣະຄຳຂອງພຣະອົງແລະພວກເຮົາຈະບໍ່ເປັນແຕ່ພຽງຜູ້ທີ່ຟັງເທົ່ານັ້ນ.

## ນຳໃຊ້ໃນຊີວິດ

ທ່ານຈຳເປັນຕ້ອງປະຕິບັດຕາມພຣະຄຳຂອງພຣະເຈົ້າໃນມື້ນີ້ແນວໃດ?. ຈົ່ງເລືອກຂໍ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້.

- **ສາລະພາບ.** ມີບາບໃດໃນຊີວິດຂອງທ່ານບໍ່ທີ່ພຣະຄຳຂອງພຣະເຈົ້າໄດ້ເປີດເຜີຍແກ່ທ່ານ? ອະນຸຍາດໃຫ້ພຣະເຈົ້າຊຳລະລ້າງມັນອອກ. ຈົ່ງສາລະພາບບາບນັ້ນຕໍ່ພຣະເຈົ້າ. ໄດ້ຮັບການໃຫ້ອະພັຍຈາກພຣະອົງແລ້ວຈົ່ງເລືອກທີ່ຈະເດີນໄປກັບພຣະອົງດ້ວຍການເຊື່ອຟັງ.
- **ໃຫ້ຄຳໝັ້ນສັນຍາ.** ມີຄຳສັ່ງໂດຍສະເພາະຫຼືວຽກທີ່ພຣະຄຳຂອງພຣະເຈົ້າຮຽກຮ້ອງໃຫ້ທ່ານເຮັດ, ແຕ່ທ່ານໄດ້ເລື່ອນເວລາໄປເຮັດອັນໃດອັນນຶ່ງ? ໃຫ້ຄຳໝັ້ນສັນຍາທີ່ຈະຕິດຕາມແລະປະຕິບັດຕາມໜ້າທີ່ນັ້ນ. ຈົ່ງປະຕິບັດຕາມການເຊື່ອຟັງ.
- **ຄຳແນະນຳ.** ທ່ານອາດພົບກັບບາງຄົນທີ່ບໍ່ສົນໃຈຫຼືມີການຕໍ່ສູ້ກັບການເຊື່ອຟັງພຣະຄຳຂອງພຣະເຈົ້າ. ຈົ່ງຊຸກຍູ້ຄົນນັ້ນ, ອະທິຖານເພື່ອລາວ, ແລະເດີນໄປກັບລາວເພື່ອຊ່ວຍລາວໃຫ້ມີຊີວິດທີ່ເຊື່ອຟັງ.

ພວກເຮົາອາດບໍ່ໄດ້ຟັງຜູ້ຊ່ຽວຊານໃນເຣື່ອງຕ່າງໆສເມີໄປ, ແຕ່ໃນຖານະທີ່ພວກເຮົາເປັນຄຣິສະຕຽນ, ພວກເຮົາຈະເປັນຄົນສລາດທີ່ຈະບໍ່ພຽງແຕ່ຟັງ ແຕ່ພວກເຮົາຍັງຈະຕ້ອງເຊື່ອຟັງແລະປະຕິບັດຕາມພຣະຄຳຂອງພຣະຜູ້ເປັນເຈົ້າແລະພຣະບັນຍັດຂອງພຣະອົງ. **<u>ເພາະເມື່ອພວກເຮົາເຮັດແລະປະຕິບັດຕາມແລ້ວພວກເຮົາຈະໄດ້ຮັບພຣະພອນ.</u>**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**